**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ມະຫາວິທະຍາໄລແຫ່ງຊາດ ເລກທີ 1849 /ມຊ

ນະຄອນຫຼວງວຽງຈັນ, ວັນທີ 26 ມິຖຸນາ 2026

## ໜັງສືແຈ້ງເຊີນປະມູນ

1. ມະຫາວິທະຍາໄລແຫ່ງຊາດ ຕາງໜ້າຄະນະຮັບຜິດຊອບກະກຽມຄວາມພ້ອມເພື່ອສະເຫຼີມສະຫຼອງວັນສ້າງຕັ້ງ ມະຫາ ວິທະຍາໄລແຫ່ງຊາດຄົບຮອບ 30 ປີ, ຂໍເຊີນບັນດາບໍລິສັດ ທີ່ມີຄຸນວຸດທິເໝາະສົມ ທີ່ສົນໃຈເຂົ້າຍື່ນ ຊອງປະມູນ ສໍາລັບໂຄງການ: ວຽກປັບປຸງປະຕູເຂົ້າ-ອອກ ດ້ານຂ້າງ ຢູ່ວິທະຍາເຂດດົງໂດກມະຫາວິທະຍາໄລ ແຫ່ງຊາດ ຕາມໜ້າວຽກ, ແຜນຜັງເຕັກນິກ ແລະ ເງື່ອນໄຂ ທີ່ກໍານົດໄວ້ໃນເອກະສານການປະມູນ, ຊຶ່ງບໍລິສັດ ແມ່ນຕ້ອງມີຄວາມສາມາດໃນການລົງທຶນກ່ອນ ແລະ ເຈົ້າຂອງໂຄງການແມ່ນຈະຊໍາລະດ້ວຍເງິນງົບປະມານຂອງ ລັດ ທີ່ໄດ້ຮັບອະນຸມັດຕາມລະບຽບຫຼັກການ, ກໍານົດເວລາກໍ່ສ້າງແມ່ນຕ້ອງໃຫ້ສໍາເລັດ ແລະ ມອບ-ຮັບ ກ່ອນ ວັນທີ 30 ຕຸລາ 2026;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດ ຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນຄັ້ງນີ້ ແມ່ນອະນຸຍາດໃຫ້ທຸກບໍລິສັດທີ່ມີຄຸນວຸດທິເໝາະສົມ ທີ່ສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ, ສາມາດຕິດຕໍ່ພົວພັນໄດ້ທີ່: 1) ມະຫາວິທະຍາໄລແຫ່ງຊາດ ສໍານັກງານຜູ້ອໍານວຍການໃຫຍ່ມະຫາວິທະຍາໄລ ແຫ່ງຊາດ (ວິທະຍາເຂດດົງໂດກ) ເບີໂທລະສັບຕິດຕໍ່ 020 5565 5930 ແລະ 2) ກົມປະເມີນຜົນ ແລະການ ຈັດຊື້-ຈັດຈ້າງ ກະຊວງການເງິນ ໂທລະສັບ 020 2981 5802 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 26 ມິຖຸນາ 2026 ຫາວັນທີ 30 ກໍລະກົດ 2026 ໃນລາຄາ 2,000,000 ກີບຕໍ່ໜຶ່ງຊອງປະມູນ ວິທີຊໍາລະເປັນເງິນສົດ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ໂດຍຈະໄດ້ນໍາໃຊ້ເຂົ້າ ໃນວຽກງານການປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ, ຂອງວັນທີ 30 ກໍລະກົດ 2026, ຊອງປະມູນທຸກຊອງແມ່ນຈະ ໄດ້ເປີດ ໃນວັນທີ 30 ກໍລະກົດ 2026, ເວລາ 14:00 ໂມງ ທີ່ຫ້ອງປະຊຸມສໍານັກງານຜູ້ອໍານວຍການໃຫຍ່ ມະຫາວິທະຍາໄລແຫ່ງຊາດ (ວິທະຍາເຂດດົງໂດກ) ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ ປະມູນທີ່ສົນໃຈເຂົ້າຮ່ວມ; ຫາຊອງປະມູນໃດຫາກສົ່ງຊ້າກວ່າເວລາກໍານົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີ ການເປີດ;
6. ທຸກຊອງປະມູນຕ້ອງມີເງິນຄໍ້າປະກັນ ຊຶ່ງສາມາດຄໍ້າປະກັນດ້ວຍແຊກທີ່ວິຊາຈາກທະນາຄານ ຫຼື ໜັງສືຄໍ້າປະກັນ ອອກໂດຍທະນາຄານ ຊຶ່ງມີມູນຄ່າບໍ່ຫລຸດສອງສ່ວນຮ້ອຍ (2%) ຂອງມູນຄ່າປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ເພື່ອເຂົ້າຮ່ວມໃນການປະມູນໂຄງການດັ່ງກ່າວ ຕາມທາງຄວນດ້ວຍ.

**ເຊັນແທນ ຜູ້ອໍານວຍການໃຫຍ່ມະຫາວິທະຍາໄລແຫ່ງຊາດ**

**ຮອງຜູ້ອໍານວຍການໃຫຍ່**

**ຮສ.ປອ ສົມທະວອນ ດາລາວົງ**

สแกนด้วย CamScanner